**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງການເງິນ

ເລກທີ 0581 /ກງ
ນະຄອນຫຼວງວຽງຈັນ, ວັນທີ 10 ກຸມພາ 2026

# ແຈ້ງການ

ເຖິງ: ອົງການຈັດຕັ້ງຂອງລັດ, ອົງການຈັດຕັ້ງສາກົນ, ບັນດາຫົວໜ່ວຍທຸລະກິດ, ບຸກຄົນ, ນິຕິບຸກຄົນ ໃນຂອບເຂດທົ່ວປະເທດ.

ເລື່ອງ: ການຈັດຕັ້ງປະຕິບັດບັນຊີຫຼຸດຜ່ອນອັດຕາພາສີພາຍໃຕ້ຂອບສັນຍາການຄ້າເສລີອາຊຽນ-ອົສຕຣາລີ ແລະ ນິວຊີແລນ (AANZFTA) ຕາມສາລະບານສິນຄ້າລະບົບເອກະພາບອາຊຽນ ຮຸ່ນປີ 2022 (AHTN 2022).

- ອີງຕາມ ດຳລັດນາຍົກລັດຖະມົນຕີວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງການເງິນ ສະບັບເລກທີ 538/ນຍ, ລົງວັນທີ 21 ສິງຫາ 2025;
- ອີງຕາມ ດຳລັດນາຍົກລັດຖະມົນຕີວ່າດ້ວຍການຮັບຮອງ ແລະ ປະກາດໃຊ້ສາລະບານສິນຄ້າລະບົບເອກະພາບອາຊຽນ ຮຸ່ນປີ 2022 ສະບັບເລກທີ 91/ນຍ, ລົງວັນທີ 16 ມັງກອນ 2023;
- ອີງຕາມ ແຈ້ງການກະຊວງການເງິນວ່າດ້ວຍການຈັດຕັ້ງປະຕິບັດສາລະບານສິນຄ້າລະບົບເອກະພາບອາຊຽນ ຮຸ່ນປີ 2022 ສະບັບເລກທີ 0637/ກງ, ລົງວັນທີ 01 ມີນາ 2023;
- ອີງຕາມ ໜັງສືລາຍງານຂອງກົມພາສີ ສະບັບເລກທີ 0043/ກພສ, ລົງວັນທີ 05 ມັງກອນ 2026.

ເພື່ອຜັນຂະຫຍາຍເນື້ອໃນຂອງດຳລັດນາຍົກລັດຖະມົນຕີວ່າດ້ວຍການຮັບຮອງ ແລະ ປະກາດໃຊ້ສາລະບານສິນຄ້າລະບົບເອກະພາບອາຊຽນ ຮຸ່ນປີ 2022 (ASEAN Harmonized Tariff Nomenclature-AHTN 2022) ສະບັບເລກທີ 91/ນຍ, ລົງວັນທີ 16 ມັງກອນ 2023, ຮັບປະກັນການຈັດຕັ້ງປະຕິບັດພັນທະສັນຍາຂອງ ສປປ ລາວ ພາຍໃຕ້ຂອບສັນຍາການຄ້າເສລີອາຊຽນ-ອົສຕຣາລີ ແລະ ນິວຊີແລນ (ASEAN-Australia and New Zealand Free Trade Agreement-AANZFTA) ແນໃສ່ການອຳນວຍຄວາມສະດວກທາງດ້ານການ ຄ້າ , ຄວາມເປັນເອກະພາບໃນການຈັດລະຫັດສິນຄ້າ, ເຄື່ອງຂອງ ແລະ ການຈັດເກັບຄ່າພາສີ ແລະ ພັນທະອື່ນ ໃນຂອບເຂດທົ່ວປະເທດ ແລະ ສອດຄ່ອງກັບຫຼັກການສາກົນ.

## ລັດຖະມົນຕີກະຊວງການເງິນ ອອກແຈ້ງການ ດັ່ງນີ້:

1. ບັນຊີຫຼຸດຜ່ອນອັດຕາພາສີ (Tariff Reduction Schedule – TRS) ໃນຂອບສັນຍາການຄ້າເສລີອາຊຽນ-ອົສຕຣາລີ ແລະ ນິວຊີແລນ (ASEAN-Australia and New Zealand Free Trade Agreement – AANZFTA) ແມ່ນໃຫ້ນຳໃຊ້ສາລະບານສິນຄ້າລະບົບເອກະພາບອາຊຽນ ຮຸ່ນປີ 2022 (AHTN 2022);

2. ບັນຊີຫຼຸດຜ່ອນອັດຕາພາສີພາຍໃຕ້ຂອບສັນຍາການຄ້າເສລີອາຊຽນ-ອົສຕຣາລີ ແລະ ນິວຊີແລນ ຕາມສາລະບານສິນຄ້າລະບົບເອກະພາບອາຊຽນ ຮຸ່ນປີ 2022 (AHTN 2022) ປະກອບມີ 11,414 ລາຍການ (ໃນລະດັບ 08 ຕົວເລກ, ມີອັດຕາພາສີ 0% - 40% ແລະ ສິນຄ້າ "ຫ້າມນຳເຂົ້າ";

3. ມອບໃຫ້ກົມພາສີ ອອກບົດແນະນຳລະອຽດກ່ຽວກັບການຈັດຕັ້ງປະຕິບັດບັນຊີຫຼຸດຜ່ອນອັດຕາພາສີພາຍໃຕ້ຂອບສັນຍາການຄ້າເສລີອາຊຽນ-ອົສຕຣາລີ ແລະ ນິວຊີແລນ (AANZFTA) ຕາມສາລະບານສິນຄ້າລະບົບເອກະພາບອາຊຽນ ຮຸ່ນປີ 2022 ພ້ອມທັງຈັດຝຶກອົບຮົມໃຫ້ເຈົ້າໜ້າທີ່ພາສີ, ຜູ້ປະກອບການ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງຮັບຊາບ ແລະ ເຂົ້າໃຈ;

4. ບັນຊີຫຼຸດຜ່ອນອັດຕາພາສີພາຍໃຕ້ຂອບສັນຍາການຄ້າເສລີອາຊຽນ-ອົສຕຣາລີ ແລະ ນິວຊີແລນ (AANZFTA) ຕາມສາລະບານສິນຄ້າລະບົບເອກະພາບອາຊຽນ ຮຸ່ນປີ 2022 ມີຜົນບັງຄັບໃຊ້ຍ້ອນຫຼັງນັບແຕ່ວັນທີ 01 ມີນາ 2023 ເປັນຕົ້ນໄປ.

ດັ່ງນັ້ນ, ຈຶ່ງແຈ້ງມາເພື່ອຊາບ ແລະ ພ້ອມກັນຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

**ລັດຖະມົນຕີ**

ກະຊວງການເງິນ ລັດຖະມົນຕີ

ສັນຕິພາບ ພົມວິຫານ